**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ

ກົມໄປສະນີ ເລກທີ 647 /ກປນ.2

ນະຄອນຫຼວງວຽງຈັນ, ວັນທີ 15 ທັນວາ 2023

# ໜັງສືແຈ້ງການ

**ຮຽນ:** ບັນດາທ່ານຜູ້ອຳນວຍການ ບໍລິສັດ ທີ່ໃຫ້ບໍລິການໄປສະນີ ທີ່ນັບຖື.

**ເລື່ອງ:** ການເກັບຄ່າທຳນຽມ ແລະ ຄ່າບໍລິການ ຂອງຕົວແທນ (Franchise) ປະຈຳປີ 2024.

- ອີງຕາມ ລັດຖະບັນຍັດຂອງປະທານປະເທດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021, ມາດຕາ 30 ແລະ 31;
- ອີງຕາມ ຂໍ້ຕົກລົງ ຂອງ ລັດຖະມົນຕີ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ, ສະບັບເລກທີ 187/ກຕສ, ລົງວັນທີ 02 ກຸມພາ 2022 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມໄປສະນີ;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍ ມາດຕະຖານສະຖານທີ່ບໍລິການໄປສະນີ ສະບັບເລກທີ 957/ກຕສ, ລົງວັນທີ 16 ມີນາ 2023;
- ອີງຕາມ ບົດບັນທຶກກອງປະຊຸມປຶກສາຫາລື ກ່ຽວກັບ ການເກັບຄ່າທຳນຽມ ແລະ ຄ່າບໍລິການ ປະຈຳປີ 2024 ເລກທີ 523/ກປນ.2 ລົງວັນທີ 12 ຕຸລາ 2023.

ກົມໄປສະນີ ຂໍຖືເປັນກຽດ ແຈ້ງມາຍັງບັນດາທ່ານຊາບວ່າ ພາຍຫຼັງທີ່ໄດ້ມີການປະກາດໃຊ້ ຂໍ້ຕົກລົງ ວ່າດ້ວຍ ມາດຕະຖານສະຖານທີ່ບໍລິການໄປສະນີ ສະບັບເລກທີ 957/ກຕສ, ລົງວັນທີ 16 ມີນາ 2023, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ໄດ້ມອບຄວາມຮັບຜິດຊອບໃຫ້ ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ, ນະຄອນຫຼວງ ຊຶ່ງແມ່ນອີງການຄຸ້ມຄອງຂະແໜງການໄປສະນີ ຂັ້ນທ້ອງຖິ່ນ ເປັນຜູ້ເກັບຄ່າທຳນຽມ ແລະ ຄ່າບໍລິການ ມາດຕະຖານສະຖານທີ່ ບໍລິການໄປສະນີ ຂອງຕົວແທນ (Franchise) ບັນດາບໍລິສັດ ບໍລິການໄປສະນີ ຕາມທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 002/ປປທ. ລົງວັນທີ 17 ມິຖຸນາ 2021, ຊຶ່ງຈະໄດ້ປະຕິບັດຄືດັ່ງລຸ່ມນີ້:

| ລ/ດ | ລາຍການ | ອັດຕາ |
|---|---|---|
| 1 | **ຄ່າທຳນຽມ** | |
| 1.1 | ອະນຸຍາດ ເປັນຕົວແທນ ຂອງບໍລິສັດສິ່ງເຄື່ອງຂະແໜງການໄປສະນີ ພາຍໃນປະເທດ | 50,000 ກີບ |
| 1.2 | ໃບຢັ້ງຢືນ ມາດຕະຖານສະຖານທີ່ບໍລິການໄປສະນີ | 50,000 ກີບ |

| | | |
|---|---|---|
| **2** | ຄ່າບໍລິການ | |
| 2.1 | ອອກອະນຸຍາດ ຮ້ານຈຳໜ່າຍ ຫຼື ຕົວແທນຂອງຜູ້ປະກອບການຂະແໜງການໄປສະນີ | 5,000 ກີບ |
| 2.2 | ໃບຢັ້ງຢືນ ມາດຕະຖານສະຖານທີ່ບໍລິການໄປສະນີ | 500,000 ກີບ |
| ລວມທັງໝົດ | | 605,000 ກີບ ຕໍ່ ຕົວແທນ |

**ຕົວແທນ (Franchise) 1 ແຫ່ງ ຈະໄດ້ຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ຈຳນວນທັງໝົດ 605,000 ກີບ (ຫົກແສນຫ້າພັນກີບ).**

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ຊ່ວຍແຈ້ງຕໍ່ໄປຍັງຕົວແທນ (Franchise) ຂອງບັນດາທ່ານ ຈັດຕັ້ງປະຕິບັດຕາມໜັງສືແຈ້ງການສະບັບນີ້ ຢ່າງເຂັ້ມງວດ.

**ຫົວໜ້າກົມ**

ກະຊວງເຕັກໂນໂລຊີ ແລະ ການສື່ສານ
ກົມໄປສະນີ

ສຸລິຍາ ຄຳບູຣາວົງ

ທ່ານ ສຸກສາຄອນ ເພັດລີວົງ 020 22469444
ຫົວໜ້າ ພະແນກນະໂຍບາຍ ແລະ ຄຸ້ມຄອງໄປສະນີ
ທ່ານ ໄຊໂຍຣາ ພານຸວົງ 020 77981263
ວິຊາການ ພະແນກນະໂຍບາຍ ແລະ ຄຸ້ມຄອງໄປສະນີ